ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------===000===------

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ບ້ານ: ໂພນພະເນົາ ກມ5
ຖະໜົນ: ໄກສອນພົມວິຫານ ເມືອງ: ໄຊເສດຖາ
ນະຄອນຫຼວງວຽງຈັນ ໂທ-ແຟັກ:(+856 21)418062 – 6

ເລກທີ: 0 0 4 1 / 2 2 - ມຫທຊ
ນະຄອນຫຼວງວຽງຈັນ, ວັນທີ: 10 ກຸມພາ 2022

ແຈ້ງການ

ເຖິງ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
ທ່ານ ຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ;
ບັນດາຜູ້ຖືຮຸ້ນ ຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ເລື່ອງ: ເກນການໃຫ້ສິດຜູ້ຖືຮຸ້ນສ່ວນນ້ອຍສະເໜີຊື່ບຸກຄົນເພື່ອລົງສະໝັກເປັນສະມາຊິກສະພາບໍລິຫານ ແລະ ຄຸນສົມບັດຂອງຜູ້ລົງສະໝັກເປັນສະມາຊິກສະພາບໍລິຫານ ຂອງບໍລິສັດ

- ອີງຕາມ ລະບຽບວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ ສະບັບເລກທີ 04/ສຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມ ລະບຽບຂອງຕະຫຼາດຫຼັກຊັບລາວວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ຂໍຖືເປັນກຽດແຈ້ງການກ່ຽວກັບເກນການໃຫ້ສິດຜູ້ຖືຮຸ້ນສ່ວນນ້ອຍ ສະເໜີຊື່ບຸກຄົນເຂົ້າຮັບການພິຈາລະນາເລືອກຕັ້ງເປັນສະມາຊິກສະພາບໍລິຫານຂອງບໍລິສັດ ໂດຍລາຍລະອຽດມີດັ່ງນີ້:

1. ຈຸດປະສົງ

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ຕ້ອງການໃຫ້ຜູ້ຖືຮຸ້ນສ່ວນນ້ອຍ ສະເໜີລາຍຊື່ບຸກຄົນເພື່ອເປັນສະມາຊິກສະພາບໍລິຫານ ເຊິ່ງບໍລິສັດ ຕ້ອງການສະແດງໃຫ້ເຫັນເຖິງຄວາມມຸ່ງໝັ້ນທີ່ຈະປະຕິບັດຕໍ່ຜູ້ຖືຮຸ້ນທຸກຄົນເທົ່າທຽມກັນ ແລະ ສະແດງເຖິງວິທີການຄັດເລືອກນັ້ນມີຂັ້ນຕອນ ແລະ ວິທີການໃນການພິຈາລະນາຊັດເຈນ ແລະ ໂປ່ງໃສ ບໍລິສັດ ໄດ້ກຳນົດຫຼັກເກນການໃຫ້ຜູ້ຖືຮຸ້ນສ່ວນນ້ອຍ

ສະເໜີຊື່ບຸກຄົນ ເພື່ອລົງສະໝັກເລືອກຕັ້ງເປັນສະມາຊິກສະພາບໍລິຫານຂອງບໍລິສັດໃນໃນການພິຈາລະນາຄັດເລືອກຂອງ ການປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021 ເຊິ່ງຈະຊ່ວຍຄັດເລືອກບຸກຄົນທີ່ມີຄຸນສົມບັດເໝາະສົມມາດຳລົງຕຳແໜ່ງເປັນສະມາຊິກສະພາບໍລິຫານບໍລິສັດ ແລະ ສາມາດປະຕິບັດໜ້າທີ່ໄດ້ຢ່າງມີປະສິດທິພາບ ເພື່ອປະໂຫຍດສູງສຸດຂອງບໍລິສັດ ແລະ ຜູ້ທີ່ມີສ່ວນໄດ້ເສຍທຸກຝ່າຍ.

2. ຄຸນສົມບັດຂອງຜູ້ຖືຮຸ້ນທີ່ຈະສະເໜີຊື່ບຸກຄົນ ເພື່ອລົງສະໝັກເຂົ້າຮັບການພິຈາລະນາຄັດເລືອກເປັນສະມາຊິກສະພາບໍລິຫານ

ຜູ້ຖືຮຸ້ນທີ່ຈະສະເໜີຊື່ບຸກຄົນ ເພື່ອລົງສະໝັກເປັນສະມາຊິກສະພາບໍລິຫານຕ້ອງມີຄຸນສົມບັດດັ່ງນີ້:

2.1 ເປັນຜູ້ຖືຮຸ້ນຂອງບໍລິສັດ ໂດຍອາດເປັນຜູ້ຖືຮຸ້ນລາຍດຽວ ຫຼື ຫຼາຍລາຍຮ່ວມກັນໄດ້

2.2 ຜູ້ຖືຮຸ້ນຂອງບໍລິສັດຕາມຂໍ້ 2.1 ຕ້ອງຖືຮຸ້ນບໍ່ໜ້ອຍກວ່າຮ້ອຍລະ 5 ຂອງຮຸ້ນບໍລິສັດທີ່ຊຳລະແລ້ວທັງໝົດ

3. ການສະເໜີຊື່ບຸກຄົນ ເພື່ອລົງສະໝັກເຂົ້າຮັບການພິຈາລະນາເລືອກຕັ້ງເປັນສະມາຊິກສະພາບໍລິຫານ

3.1 ຄຸນສົມບັດ ແລະ ຂໍ້ຕ້ອງຫ້າມຂອງບຸກຄົນທີ່ລົງສະໝັກເປັນສະມາຊິກສະພາບໍລິຫານ ຕ້ອງມີຄຸນສົມບັດ ແລະ ບໍ່ມີລັກສະນະຕ້ອງຫ້າມ ດັ່ງນີ້

3.1.1 ຄຸນສົມບັດຖືກຕ້ອງ ແລະ ບໍ່ມີລັກສະນະຕ້ອງຫ້າມຕາມກົດໝາຍວ່າດ້ວຍວິສາຫະກິດ ເລກທີ 46/ສພຊ ລົງວັນທີ 26 ທັນວາ 2013 ແລະ ຂໍ້ຕົກລົງວ່າດ້ວຍສະພາບໍລິຫານ ເລກທີ 10/ຄຄຊ ລົງວັນທີ 26 ເມສາ 2019 ແລະ ກົດໝາຍທີ່ກ່ຽວຂ້ອງອື່ນໆ

3.1.2 ບຸກຄົນທີ່ຖືກສະເໜີຊື່ເປັນສະມາຊິກສະພາບໍລິຫານເພດ ຍິງ/ຊາຍ

3.1.3 ຕ້ອງມີຄວາມຮູ້, ຄວາມສາມາດ, ຄວາມເປັນອິດສະຫຼະປະຕິບັດໜ້າທີ່ສະມາຊິກສະພາບໍລິຫານດ້ວຍຄວາມລະມັດລະວັງ, ດ້ວຍຄວາມຊື່ສັດສາມາດທຸ່ມເທສະລະເວລາໄດ້ຢ່າງເຕັມທີ່, ມີອາຍຸເໝາະສົມ, ມີສຸຂະພາບຮ່າງກາຍທີ່ແຂງແຮງ ແລະ ຈິດໃຈສົມບູນສາມາດປະຊຸມສະພາບໍລິຫານຢ່າງສະໝ່ຳສະເໝີ, ມີເວລາກຽມຕົວເປັນການລ່ວງໜ້າກ່ອນການປະຊຸມ, ມີສ່ວນຮ່ວມໃນການປະຊຸມສາມາດສະແດງຄວາມຄິດເຫັນໃນທີ່ປະຊຸມ, ປະຫວັດການເຮັດວຽກມີຈາລີຍະທຳດີງາມ, ລວມທັງໄດ້ຮັບການຍອມຮັບຈາກສັງຄົມ

3.1.4 ມີຄວາມຮູ້ຄວາມສາມາດເໝາະສົມກັບທຸລະກິດຂອງບໍລິສັດ ໄດ້ແກ່: ມີຄວາມຮູ້ຄວາມຊຳນານກ່ຽວກັບທຸລະກິດເຊົ່າສິນເຊື່ອ (Leasing) ຫຼື ດ້ານການເງິນການທະນາຄານ (Finance and Banking) ຫຼື ດ້ານບັນຊີ ແລະ ກວດສອບ (Accounting and

Auditing) ຫຼື ກົນລະຍຸດທາງການຕະຫຼາດ ແລະ ການແຂ່ງຂັນ (Marketing) ຫຼື ດ້ານ ເທັກໂນໂລຍີການສື່ສານ ແລະ ນະວັດຕະກຳ (Intelligent Technology and Innovation) ຫຼື ດ້ານປະຕິບັດການ (Operation) ຫຼື ດ້ານກົດໝາຍ (Legal) ຫຼື ອື່ນໆ

3.2 ຜູ້ຖືຮຸ້ນທີ່ມີຄຸນສົມບັດຄົບຖ້ວນຕາມຂໍ້ 2 ຂອງຫຼັກເກນນີ້ ສາມາດສະເໜີຊື່ບຸກຄົນເພື່ອລົງສະໝັກ ເຂົ້າຮັບການພິຈາລະນາຄັດເລືອກເປັນສະມາຊິກສະພາບໍລິຫານໄດ້ໂດຍຈັດເຮັດເປັນໜັງສືຂໍສະ ເໜີຊື່ບຸກຄົນ ພ້ອມແນບປະຫວັດ ແລະ ເອກະສານຫຼັກຖານທີ່ກ່ຽວຂ້ອງຢ່າງຄົບຖ້ວນ ສົ່ງເຖິງ ບໍລິສັດ ລະຫວ່າງວັນທີ 14 ເຖິງ 28 ກຸມພາ 2022 ຕາມທີ່ຢູ່ນີ້

ເລຂານຸການບໍລິສັດ
ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
ຕັ້ງຢູ່ເຮືອນເລກທີ 628 ໜ່ວຍ 19 ບ້ານໂພນພະເນົາ ກມ5 ຖະໜົນໄກສອນພົມວິຫານ
ເມືອງ ໄຊເສດຖາ ນະຄອນຫຼວງວຽງຈັນ ສປປ ລາວ
ໂທ-ແຟັກ +856 21 418 062-6
ຫຼື ທາງ email address: ir@mahathuen.com

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານ ເພື່ອຮັບຊາບດ້ວຍ.

ຜູ້ອຳນວຍການໃຫ່ຍ

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ MAHATHUEN LEASING PUBLIC COMPANY

(ທອງ ມານີ ຕຣີລິດວິໄລ)